ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

**ສະຫະກອນອອມຊັບ-ສິນເຊື່ອ**

**ບໍລິສັດ ອີທີແອລ ມະຫາຊົນ**

ເລກທີ 084 /ສອສ

ນະຄອນຫລວງວຽງຈັນ, ວັນທີ 19 / 8 /2015

## ຂໍ້ຕົກລົງ

## ຂອງສະຫະກອນອອມຊັບ-ສິນເຊື່ອ ອທອ

## ວ່າດ້ວຍລະບອບເງິນອຸດໜູນແຮງງານ ແລະ ເງິນບໍານເນັດ.

- ອີງຕາມກົດລະບຽບພາຍໃນ ຂອງສະຫະກອນອອມຊັບ-ສິນເຊື່ອ ອທອ ສະບັບເລກທີ 005/ສອສ, ລົງວັນທີ 10/2/2013.
- ເພື່ອເປັນການປະຕິບັດນະໂຍບາຍ ຕໍ່ກັບສະມາຊິກສະຫະກອນອອມຊັບ-ສິນເຊື່ອ ອທອ ທີ່ໄດ້ປະກອບສ່ວນ ເຂົ້າໃນການບໍລິຫານຈັດການວຽກງານປະຈໍາວັນຂອງ ສອສ ໃນການບໍລິການໃຫ້ກັບສະມາຊິກ.
- ອີງຕາມ ການຄົ້ນຄ້ວາ ເປັນເອກະພາບຂອງ ຄະນະບໍລິຫານງານ ສະຫະກອນອອມຊັບ-ສິນເຊື່ອ ອທອ.

ສະພາບໍລິຫານສະຫະກອນອອມຊັບ-ສິນເຊື່ອ ອທອ ອອກຂໍ້ຕົກລົງ:

**ມາດຕາ 1** : **ຈຸດປະສົງ**:

- ເພື່ອເປັນການກໍານົດນະໂຍບາຍດ້ານສະຫວັດດີການ ໃຫ້ແກ່ສະມາຊິກ ສະຫະກອນອອມຊັບ-ສິນເຊື່ອ ອທອ ທີ່ສະໝັກໃຈ ແລະ ໄດ້ຮັບການແຕ່ງຕັ້ງເຂົ້າມາບໍລິຫານວຽກງານປະຈໍາ ຕາມກົງຈັກ ການຈັດຕັ້ງ ຂອງສະຫະກອນອອມຊັບ-ສິນເຊື່ອ ດ້ວຍການຊົດເຊີຍຄ່າແຮງງານຕາມຄວາມເໝາະສົມ, ສ້າງປະຖົມປັດໄຈ ໃນການຍົກສູງຄວາມຮັບຜິດຊອບ ໃຫ້ກັບອົງກອນ ແລະ ບໍລິຫານ ສອສ ໃຫ້ເຕີບໃຫ່ຍ ເຂັ້ມແຂງເປັນກ້າວໆ.
- ເພື່ອເປັນບ່ອນອີງໃຫ້ແກ່ ການປະຕິບັດນະໂຍບາຍ ຕໍ່ຜູ້ທີ່ໄດ້ປະກອບສ່ວນ ໃນການພັດທະນາ ແລະ ປັບປຸງ ສະຫະກອນອອມຊັບ-ສິນເຊື່ອ ອທອ ໃນແຕ່ລະໄລຍະ ໃຫ້ສອດຄ່ອງກັບ ນະໂຍບາຍຂອງພັກ-ລັດ.